King County

Department of Community and Human Services
Mental Health, Chemical Abuse and Dependency Services Division
Chinook Building, CNK-HS-0400
401 Fifth Avenue, Suite 400
Seattle, WA 98104
206 263-9000 TTY/TDD: 206-205-0569
www.kingcounty.gov/healthServices/MHSA

"ການປະກາດແຈ້ງຄວາມຂອງການປະພຶດຕໍ່ເຮື່ອງສ່ວນຕົວ" ຕໍ່ລົງໄປນີ້ ປະກອບດ້ວຍລາຍລະອຽດອັນສໍາຄັນ ກ່ຽວກັບເອກະສານບັນທຶກຂອງສຸຂະພາບປະສາດຂອງທ່ານຖືກເອົາໄປນໍາໃຊ້ ແລະຖືກປົກປ້ອງໂດຍຫ້ອງການ ຮັກສາໂຣກປະສາດຂອງຄິງຄາວທີແນວໃດ. ອັນນີ້ແມ່ນເອກະສານປະກາດແຈ້ງຄວາມທີ່ໄດ້ຂຽນຂຶ້ນ ແລະ ເອົາໃຫ້ທ່ານ ເພື່ອນໍາໃຊ້ຕາມກົດໝາຍໃໝ່ ຊຶ່ງເອີ້ນວ່າ HIPAA.[1]

I. ພາກທີ່ ໑ ຂອງການປະກາດແຈ້ງຄວາມຂອງການປະພຶດຕໍ່ເຮື່ອງສ່ວນຕົວ ອະທິບາຍສິດທິ ຂອງທ່ານກ່ຽວກັບເອກະສານບັນທຶກສຸຂະພາບຂອງທ່ານ.

II. ພາກທີ່ ໒ ບອກກ່ຽວກັບໜ້າທີ່ຂອງຫ້ອງການຮັກສາສຸຂະພາບຂອງໂຣກປະສາດຂອງ ຄິງຄາວທີ ທີ່ມີກ່ຽວກັບການຮັກສາເອກະສານບັນທຶກສຸຂະພາບຂອງທ່ານ ໃຫ້ເປັນເຮື່ອງສ່ວນ ຕົວແລະເອົາກັບປີຂອງໃບປະກາດແຈ້ງຄວາມນັ້ນໃຫ້ທ່ານ.

III. ພາກທີ່ ໓ ອະທິບາຍວິທີຂອງຫ້ອງການຮັກສາສຸຂະພາບຂອງໂຣກປະສາດອາດຈະໃຊ້ ຫຼື ຮ່ວມໃຊ້ເອກະສານບັນທຶກສຸຂະພາບຂອງທ່ານ ເພື່ອການປິ່ນປົວຂອງທ່ານ, ເພື່ອການໃຊ້ ຈ່າຍໃນການປິ່ນປົວ, ແລະເຫດຜົນອື່ນໆ.

IV. ພາກທີ່ ໔ ອະທິບາຍວິທີທີ່ທ່ານອາດຈະຂໍຮ້ອງຄວາມຊ່ວຍເຫຼືອ ເພື່ອໃຫ້ເຂົ້າໃຈສິດທິ ຂອງທ່ານ ຫຼືຕິຊົມກ່ຽວກັບການປະພຶດຕໍ່ເຮື່ອງສ່ວນຕົວ.

ກະລຸນາເບິ່ງການປະກາດແຈ້ງຄວາມເພື່ອລາຍລະອຽດອັນຄົບຖ້ວນ.

[1] ຣັຖບັນຍັດປະກັນໄພອັນສາມາດຍົກຍ້າຍແລະມີໜ້າທີ່ຮັບຜິດຊອບໄດ້

Department of Community and Human Services
Mental Health, Chemical Abuse and Dependency Services Division
Chinook Building, CNK-HS-0400
401 Fifth Avenue, Suite 400
Seattle, WA 98104
206 263-9000 TTY/TDD: 206-205-0569
www.kingcounty.gov/healthServices/MHSA

## ປະກາດແຈ້ງຄວາມຂອງການປະຕິບັດເຣື້ອງສ່ວນຕົວ

**ຂແນງບໍຣິການຮັກສາໂຣກປະສາດໃນຄິ່ງຄາວທີ, ການໃຊ້ແບບຜິດແລະພແນກບໍຣິການຜູ້ທີ່ຕິດຫາດເຄມີ**
**ແຜນການຮັກສາໂຣກປະສາດ**

*ເລີ້ມແຕ່ວັນທີ່: ໑໔ ເມສາ ໒໐໐໓*

ການປະກາດແຈ້ງຄວາມນີ້ອະທິບາຍວ່າ ລາຍຣະອຽດຂອງການແພດກ່ຽວກັບທ່ານ ອາດຈະຖືກເອົາໄປນໍາໃຊ້ ແລະເຜີຍແຜ່ ແລະວິທີຂອງທ່ານທີ່ຈະສາມາດເກັບກໍາເອົາລາຍລະອຽດເຫຼົ່ານີ້.

## <u>ກະຣຸນາທົບທວນຄືນຢ່າງຣະມັດຣະວັງ</u>

ຂແນງບໍຣິການຮັກສາໂຣກປະສາດຂອງຄິ່ງຄາວທີ, ການໃຊ້ຜິດແລະຕິດຫາດເຄມີ (MHCADSD) ນັບຖືເຣື້ອງສ່ວນຕົວຂອງທ່ານ. ພວກເຮົາເຂົ້າໃຈວ່າເຣື້ອງສ່ວນຕົວກ່ຽວກັບລາຍຣະອຽດຂອງການແພດຂອງທ່ານ ມັນເປັນສິ່ງທີ່ສໍາຄັນ. ພວກເຮົາຈະບໍ່ເຜີຍແຜ່ກ່ຽວກັບລາຍຣະອຽດຂອງສຸຂະພາບຂອງທ່ານໃຫ້ຄົນ ອື່ນ ເວັ້ນເສັຽແຕ່ທ່ານຫາກອະນຸຍາດໃຫ້ພວກເຮົາ ຈຶ່ງໃຫ້ໄດ້, ຫຼືກົດໝາຍຫາກໃຫ້ອະນຸຍາດ ຫຼືບັງຄັບໃຫ້ພວກເຮົາເທົ່ານັ້ນ.

## I. ສິດທິຂອງທ່ານຕໍ່ລາຍລະອຽດຂອງສຸຂພາບ

ພວກເຮົາຈະມີເອກະສານບັນທຶກການແພດກ່ຽວກັບສຸຂະພາບຂອງທ່ານ. ທ່ານມີສິດທິບາງຢ່າງ ເວົ້າເຖິງລາຍລະອຽດເຫຼົ່ານີ້ ປະກອບດ້ວຍສິດທິ ຄື:

- ຂໍຮ້ອງໃຫ້ມີການຫວງຫ້າມກ່ຽວກັບລາຍລະອຽດຂອງສຸຂພາບທີ່ພວກເຮົາໃຊ້ ຫຼືເຜີຍແຜ່ກ່ຽວກັບທ່ານສໍາຣັບການຈ່າຍຄ່າຂອງການປິ່ນປົວຫຼືການດໍາເນີນງານໃນການຮັກສາສຸຂພາບ. ທ່ານຈະຕ້ອງສົ່ງຄໍາຮ້ອງນີ້ ດ້ວຍການຂຽນໜັງສືຍື່ນຂື້ນຫາເຈົ້າໜ້າທີ່ຜູ້ຮັກສາເຣື້ອງສ່ວນຕົວທີ່ຫ້ອງການຂອງພວກເຮົາ. ເຈົ້າໜ້າທີ່ຜູ້ຮັກສາເຣື້ອງສ່ວນຕົວຈະບອກໃຫ້ທ່ານເຊັນເອກະສານຂອງການຫວງຫ້າມ, ຊຶ່ງທ່ານຄວນຈະປະກອບຂຽນເອກະສານນັ້ນ ແລ້ວສົ່ງຄືນໃຫ້ເຈົ້າໜ້າທີ່ຜູ້ຮັກສາເຣື້ອງສ່ວນຕົວ. ພວກເຮົາບໍ່ຖືກບັງຄັບໃຫ້ເຫັນດີນໍາຂໍ້ຫວງຫ້າມທີ່ທ່ານຂໍຮ້ອງ.

- ລຶບລ້າງຂໍ້ອະນຸຍາດເດີມເພື່ອການໃຊ້ຫຼືເຜີຍແຜ່ລາຍຣະອຽດຂອງສຸຂພາບ ໂດຍການສົ່ງໜັງສືແຈ້ງຄວາມຂຶ້ນໄປຫາພວກເຮົາ. ມີຟອມໄວ້ໃຫ້ສຳຣັບຈຸດປະສົງດັ່ງນີ້. ການສັ່ງເລີກລົ້ມຂອງທ່ານຈະບໍ່ເປັນຜົນສະທ້ອນຕໍ່ລາຍຣະອຽດທີ່ໄດ້ໃຫ້ໄປຮຽບຮ້ອຍແລ້ວ. ເຊັ່ນດຽວກັນ ມັນຈະບໍ່ເປັນຜົນສະທ້ອນຕໍ່ການກະທຳທີ່ຜ່ານມາກ່ອນໜ້າພວກເຮົາໄດ້ຮັບໜັງສືການສັ່ງເລີກ.

- ໄດ້ຮັບເຈັ້ງອັດສຳເນົາຂອງການປະກາດແຈ້ງຄວາມຂອງການປະພຶດຕໍ່ເຣື້ອງສ່ວນຕົວ ເພື່ອ (“ປະກາດແຈ້ງຄວາມ”) ການປົກປ້ອງ ລາຍລະອຽດຂອງສຸຂພາບຈາກພວກເຮົາ.

- ຂໍຮ້ອງເພື່ອໃຫ້ທ່ານໄດ້ເຂົ້າກວດກາແລະຊື້ໃບອັດສຳເນົາເອກະສານບັນທຶກກ່ຽວກັບສຸຂະພາບຂອງທ່ານ. ທ່ານຈະຕ້ອງຂຽນຄຳຮ້ອງຍື່ນ. ພວກເຮົາມີຟອມໄວ້ໃຫ້ທ່ານ ສຳຣັບການຮ້ອງຂໍຊນິດນີ້. ຖ້າຄຳຮ້ອງຂອງທ່ານຖືກປະຕິເສດ, ທ່ານອາດຈະຮ້ອງຂໍກາບອຸທອນຕໍ່ການປະຕິເສດນີ້ (ຂໍຮ້ອງໃຫ້ພວກເຮົາພິຈາຣະນາຄືນ). ການຮ້ອງຂໍກາບອຸທອນນີ້ຈະຕ້ອງເປັນການຂຽນຄຳຮ້ອງສົ່ງຂຶ້ນໄປ.

- ຂໍຮ້ອງໃຫ້ພວກເຮົາປ່ຽນແປງລາຍຣະອຽດຂອງເອກະສານສຸຂະພາບອັນໃດອັນໜຶ່ງ ເພື່ອນຳໃຊ້ໃນການຕັດສິນກ່ຽວກັບການປິ່ນປົວຂອງທ່ານ, ປະກອບດ້ວຍເອກະສານບັນທຶກ ຂອງການປິ່ນປົວຫຼືການຈ່າຍ. ຫາກຈະກະທຳດັ່ງນັ້ນ, ທ່ານຈະຕ້ອງຂຽນໃບຄຳຮ້ອງ ຍື່ນໄປຫາຫ້ອງການຂອງການຮັກສາເຣື້ອງສ່ວນຕົວທີ່ 401 Fifth Avenue, Suite 400, Seattle, WA 98104 ແລະບອກພວກເຮົາວ່າ ເປັນຫຍັງທ່ານຈຶ່ງເຊື່ອວ່າລາຍລະອຽດນັ້ນມັນບໍ່ຖືກຕ້ອງ. ພວກເຮົາອາດຈະປະຕິເສດການຮ້ອງຂໍຂອງທ່ານໃນການປ່ຽນແປງ ຖ້າຫາກຄຳຮ້ອງບໍ່ແມ່ນການຂີດຂຽນ ຫຼືບໍ່ປະກອບດ້ວຍເຫດຜົນ ເພື່ອເຮັດໃຫ້ຄຳຮ້ອງມີນ້ຳໜັກເຂົ້າຕື່ມ. ພວກເຮົາອາດຈະປະຕິເສດການຮ້ອງຂໍເຊັ່ນດຽວກັນ ຖ້າທ່ານຫາກຂໍຮ້ອງໃຫ້ພວກເຮົາປ່ຽນແປງລາຍຣະອຽດຂອງເອກະສານສຸຂະພາບ ທີ່:
  - ບໍ່ແມ່ນຂອງພວກເຮົາເຮັດຂຶ້ນມາ. ເວັ້ນເສັຽແຕ່ວ່າຄົນ ຫຼື ອົງການທີ່ສ້າງລາຍຣະອຽດຂອງເອກະສານສຸຂະພາບນັ້ນຫາກບໍ່ມີໄວ້ໃຫ້ທ່ານເພື່ອຈະສ້າງການປ່ຽນແປງ;
  - ບໍ່ແມ່ນພາກສ່ວນລາຍຣະອຽດຂອງເອກະສານສຸຂະພາບ ພວກເຮົາເກັບກຳໄວ້ເພື່ອການຕັດສິນໃນການປິ່ນປົວທ່ານ;
  - ບໍ່ແມ່ນພາກສ່ວນລາຍຣະອຽດຂອງເອກະສານສຸຂະພາບທີ່ທ່ານຖືກອະນຸຍາດໃຫ້ກວດກາ ຫຼືກັອບປີ; ຫຼື
  - ຖືກຕ້ອງ ແລະ ຄົບຖ້ວນ.

- ຖ້າພວກເຮົາປະຕິເສດການຮ້ອງຂໍຂອງທ່ານ ໃນການປ່ຽນແປງລາຍຣະອຽດຂອງເອກະສານສຸຂະພາບຂອງທ່ານ, ພວກເຮົາຈະສົ່ງໜັງສືແຈ້ງໃນການປະຕິເສດດ້ວຍເຫດຜົນຂອງການປະຕິເສດ ແລະໃຫ້ຄຳແນະນຳທ່ານ ເພື່ອໃຫ້ທ່ານມີໂອກາດປະກອບໜັງສືຄຳຄິດຄຳເຫັນ ຊຶ່ງທ່ານບໍ່ເຫັນດີໃນການປະຕິເສດ. ຖ້າທ່ານຫາກບໍ່ປາຖນາຈະຕຽມໜັງສື ດ້ວຍຄວາມຄິດຄວາມເຫັນໃນການບໍ່ເຫັນດີ, ທ່ານອາດຈະຂໍຮ້ອງໃຫ້ການຮ້ອງຂໍໃນການປ່ຽນແປງ ແລະໃຫ້ການປະຕິເສດຂອງພວກເຮົາຕິດຂັດໃສ່ທຸກໆລາຍຣະອຽດຂອງເອກະສານສຸຂະພາບທີ່ຈະເຜີຍແຜ່ໃນອານາຄົດຊຶ່ງເປັນຄຳຮ້ອງຂອງທ່ານ. ຖ້າທ່ານເລືອກເອົາການຍື່ນໜັງສືສເນີຊຶ່ງທ່ານບໍ່ເຫັນດີ, ພວກເຮົາມີສິດກະກຽມໃນການຂຽນໜັງສືປະຕິເສດຕໍ່ຄຳສເນີໃນການບໍ່ເຫັນດີຂອງທ່ານ. ໃນກໍຣະນີນີ້, ພວກເຮົາຈະຕິດຂັດໜັງສືຂໍຮ້ອງ ແລະການປະຕິເສດ (ພ້ອມທັງໜັງສືຄຳຮ້ອງຕົ້ນສບັບ ແລະ ການປະຕິເສດ) ໃສ່ທຸກໆລາຍຣະອຽດຂອງເອກະສານສຸຂະພາບທີ່ຈະເຜີຍແຜ່ໃນອານາຄົດ ຊຶ່ງເປັນການຮ້ອງຂໍຂອງທ່ານ.

- ຂໍຮ້ອງໃຫ້ພວກເຮົາມອບໃຫ້ທ່ານດ້ວຍການເຜີຍແຜ່ບັນຊີທີ່ພວກເຮົາໄດ້ກະທຳໃນລາຍລະອຽດຂອງສຸຂະພາບຂອງທ່ານ ຕັ້ງແຕ່ວັນທີ່ ໑໔ ເມສາ, ໒໐໐໓. ການບັນຊີແມ່ນລາຍການອັນເຜີຍແຜ່. ແຕ່ວ່າລາຍການນີ້ຈະບໍ່ປະກອບດ້ວຍການເຜີຍແຜ່ບາງຢ່າງຂອງລາຍລະອຽດກ່ຽວກັບສຸຂະພາບຂອງທ່ານ ສິ່ງເຫຼົ່ານັ້ນກະທຳສຳຣັບຈຸດປະສົງຂອງການປິ່ນປົວ, ການຈ່າຍ ແລະລະບົບຂອງການຮັກສາສຸຂະພາບ ຫຼືການເຜີຍແຜ່ທີ່ທ່ານໃຫ້ອະນຸຍາດ ດ້ວຍການຂີດຂຽນ. ເພື່ອຂໍຮ້ອງການເຜີຍແຜ່ຂອງການບັນຊີ, ທ່ານຈະຕ້ອງສົ່ງໜັງສືຄຳຮ້ອງຂຶ້ນໄປຫາຫ້ອງການຂອງຝ່າຍຮັກສາເຣື້ອງສ່ວນຕົວ. ເພື່ອຄວາມສະດວກຂອງທ່ານ, ທ່ານອາດຈະສົ່ງຄຳຮ້ອງຂອງທ່ານຢູ່ໃນຟອມເອີ້ນວ່າ “Request For Accounting (ຂໍຮ້ອງການບັນຊີ)”, ຊຶ່ງທ່ານອາດສາມາດເອົາໄດ້ຈາກເຈົ້າໜ້າທີ່ຂອງຝ່າຍຮັກສາເຣື້ອງສ່ວນຕົວ.

- ບອກໃຫ້ພວກເຮົາຕິດຕໍ່ກັບທ່ານກ່ຽວກັບການຮັກສາສຸຂະພາບຂອງທ່ານໃນສຖານທີ່ອັນແນ່ນອນ ຫລື ດ້ວຍວິທີການອັນໃດໜຶ່ງທີ່ແນ່ນອນ. ເພື່ອຂໍຮ້ອງການຕິດຕໍ່ແບບປິດລັບເຊັ່ນນັ້ນ, ທ່ານຈະຕ້ອງໃຫ້ການຮ້ອງຂໍດ້ວຍການຂີດຂຽນ, ເຊັ່ນຊື່ ແລະລົງວັນທີ່. ທ່ານອາດຈະຍື່ນຄຳຮ້ອງຂອງທ່ານດ້ວຍຟອມຂອງພວກເຮົາຫຼືເປັນໜັງສືປະກອບດ້ວຍລາຍລະອຽດທັງໝົດຢູ່ໃນ

ຟອມນັ້ນ. ພວກເຮົາຈະຕອບສນອງທ່ານຕໍ່ການຮ້ອງຂໍທັງໝົດອັນມີເຫດຜົນ. ທ່ານບໍ່ຈຳເປັນຈະໃຫ້ເຫດຜົນໃນການຮ້ອງຂໍ; ແຕ່ການຮ້ອງຂໍຂອງທ່ານຈະຕ້ອງບອກຊັດເຈນ ວິທີ ຫຼື ສຖານທີ່ທີ່ທ່ານປາຖນາຢາກໃຫ້ຕິດຕໍ່ຫາ.

## II. ໜ້າທີ່ຂອງ MHCADSD

ພວກເຮົາຕ້ອງປະຕິບັດຕາມກົດໝາຍ:

- ເກັບກຳລາຍລະອຽດກ່ຽວກັບສຸຂະພາບຂອງທ່ານໃຫ້ເປັນຄວາມລັບສ່ວນຕົວ ເວັ້ນເສັຽແຕ່ສິ່ງສແດງຂ້າງລຸ່ມນີ້;
- ເອົາໃບປະກາດແຈ້ງນີ້ໃຫ້ທ່ານໃນເມື່ອທ່ານຂໍຮ້ອງ;
- ເຮັດຕາມເທີມຂອງການປະກາດແຈ້ງຂອງການປະພຶດຕໍ່ເຣື້ອງສ່ວນຕົວ ຊຶ່ງເປັນຜົນໃນປະຈຸບັນນີ້;

ພວກເຮົາມີສິດປ່ຽນແປງການປະພຶດຂອງພວກເຮົາກ່ຽວກັບການປົກປ້ອງລາຍລະອຽດຂອງສຸຂະພາບ ທີ່ພວກເຮົາເກັບກຳໄວ້. ຖ້າພວກເຮົາປ່ຽນແປງ, ພວກເຮົາຈະປັບປຸງໜັງສືປະກາດແຈ້ງສບັບນີ້ໃໝ່. ທ່ານອາດຈະໄດ້ຮັບກົບປີອັນໃໝ່ຫຼ້າສຸດຂອງໜັງສືປະກາດແຈ້ງສບັບນີ້ ໂດຍການໂທຣະສັບແລະຖາມຫາ ຫຼືເຂົ້າໄປຢ້ຽມຢາມຫ້ອງການຂອງພວກເຮົາແລ້ວກໍໄປຂໍອກເອົາ. ທ່ານອາດຈະສາມາດຊອກເຫັນກົບປີຂອງການປະກາດແຈ້ງນີ້ຢູ່ໃນອິນເຕີແນດທີ່ www.kingcounty.gov/healthServices/MHSA

## III. ດ້ວຍວິທີໃດພວກເຮົາຈະໃຊ້ຫຼືເຜີຍແຜ່ລາຍລະອຽດກ່ຽວກັບການແພດຂອງທ່ານ

ແຕ່ລະປະເພດຕໍ່ລົງໄປນີ້ບັນລະຍາຍວິທີຂອງພວກເຮົາໃຊ້ແລະການເຜີຍແຜ່ລາຍລະອຽດກ່ຽວກັບສຸຂະພາບ (ປະກອບດ້ວຍໂຣກປະສາດແລະສຸຂະພາບຮ່າງກາຍ). ສຳຣັບແຕ່ລະປະເພດຂອງການໃຊ້ແລະການເຜີຍແຜ່, ພວກເຮົາຈະອະທິບາຍວ່າມີຄວາມໝາຍແນວໃດແລະໃຫ້ຕົວຢ່າງ. ບໍ່ແມ່ນທຸກໆການນຳໄປໃຊ້ ແລະການເຜີຍແຜ່ໃນປະເພດຈະມີຢູ່ໃນລາຍການ. ເຖິງຢ່າງໃດກໍຕາມ, ທຸກສິ່ງຢ່າງລາຍລະອຽດທີ່ພວກເຮົາໄດ້ຮັບອະນຸຍາດໃຫ້ໃຊ້ແລະເຜີຍແຜ່ມັນຈະນອນຢູ່ພາຍໃນນຶ່ງຂອງປະເພດທັງໝົດ.

**ຕົວຢ່າງຂອງການໃຊ້ແລະເຜີຍແຜ່ສຳຣັບການປິ່ນປົວ, ການຈ່າຍຄ່າແລະລະບົບຂອງການຮັກສາສຸຂະພາບ**

*ສຳຣັບການປິ່ນປົວ:*

- ລາຍລະອຽດທີ່ໄດ້ມາຈາກຜູ້ດູແລຮັກສາສຸຂະພາບຂອງທ່ານຈະຖືກບັນທຶກລົງໃນບົດບັນທຶກການແພດຂອງທ່ານ ແລະຖືກໃຊ້ໃນການຕັດສິນວ່າ ການປິ່ນປົວອັນໃດມັນຈະເໝາະສົມກັບທ່ານ.
- ພວກເຮົາເຊັ່ນກັນອາດຈະສົ່ງລາຍລະອຽດໃຫ້ທ່ານໝໍອື່ນໆ ຫຼື ຜູ້ຊ່ຽວຊານໃນການປິ່ນປົວສຸຂະພາບ ຊຶ່ງກ່ຽວຂ້ອງໃນການປິ່ນປົວຂອງທ່ານ.

*ສຳຣັບການຈ່າຍຄ່າ:*

- ພວກເຮົາຂໍຮ້ອງການຈ່າຍຄ່າມາຈາກກົມປະຊາສົງເຄາະຂອງຣັຖວໍຊິງຕັນ (DSHS). ເພື່ອການໃຫ້ອະນຸຍາດລາຍຈ່າຍເຫຼົ່ານີ້, DSHS ຕ້ອງການລາຍລະອຽດເຊັ່ນການກວດພົບພຍາດຂອງທ່ານ, ການບໍຣິການທີ່ໄດ້ນຳໃຊ້ ຫຼືການປິ່ນປົວທີ່ຖືກສເນີມາ.

*ສຳຣັບຣະບົບຂອງການຮັກສາສຸຂະພາບ:*

- ສະມາຊິກພນັກງານຂອງພວກເຮົາກວດບົດບັນທຶກເປັນປະຈຳ ເພື່ອວັດແທກຄຸນນະພາບແລະປັບປຸງການບໍຣິການທີ່ພວກເຮົາບໍຣິການໃຫ້ທ່ານ.

**ການເຜີຍແຜ່ແລະການໃຊ້ອື່ນໆ**

*ການປະກາດແຈ້ງການ:*

- ພວກເຮົາອາດຈະເຜີຍແຜ່ລາຍລະອຽດກ່ຽວກັບທ່ານ ເພື່ອການຊ່ອຍເຫຼືອໃນການຜ່ອນຄາຍຂອງໄພອັນຕຣາຍ.

*ພວກເຮົາອາດຈະໃຊ້ແລະເຜີຍແຜ່ລາຍລະອຽດສຸຂະພາບອັນທາວງຫ້າມຂອງທ່ານດັ່ງຕໍ່ລົງໄປນີ້:*

- ເຖິງຂັ້ນວ່າການເຜີຍແຜ່ນັ້ນແມ່ນການຂໍຮ້ອງຈາກກົດໝາຍ.
- ເພື່ອດຳເນີນການເບິ່ງແຍງສຸຂະພາບ.
- ເພື່ອຈຸດປະສົງຂອງສຸຂະພາບແລະການປອດໄພຂອງສາທາຣະນະ ຊຶ່ງອະນຸຍາດໃຫ້ ຫຼືຂໍຮ້ອງຈາກກົດໝາຍ.
- ເພື່ອຣາຍງານການສົງໃສໃນການກະທຳຜິດທໍຣະມານ ຫຼືຂາດການເອົາໃຈໃສ່.
- ໃນວົງການຂອງການສານ/ຣະບົບຂອງການປົກຄອງ.
- ເພື່ອຈຸດປະສົງຂອງຝ່າຍຕຳຣວດ ຊຶ່ງອະນຸຍາດໃຫ້ ຫຼືຂໍຮ້ອງຈາກກົດໝາຍ.
- ໃຫ້ສະຖາບັນແຫ່ງການດັດສ້າງ ຖ້າທ່ານຖືກຄຸກ ຫຼືເປັນນັກໂທດ, ດັ່ງທີ່ເຫັນວ່າຈຳເປັນ ເພື່ອສຸຂະພາບຂອງທ່ານ ແລະ ສຸຂະພາບແລະຄວາມປອດໄພຂອງຄົນອື່ນ.
- ສຳຣັບວຽກງານຂອງຣັຖບານອັນພິເສດ ແລະການຈ່າຍໃຫ້ຄົນງານໃນເມື່ອຖືກບາດເຈັບ.
- ສຳຣັບການດຳເນີນການຄົ້ນຄວ້າທີ່ຖືກອະນຸຍາດແລ້ວ.
- ໃຫ້ເຈົ້າໜ້າທີ່ກວດຄົນຕາຍແບບກະທັນຫັນ, ນັກກວດກາການແພດ, ຫຼືຜູ້ອຳນວຍການຂອງງານຊາປະນະກິດສົບ.

**ການໃຊ້ອື່ນໆ**

- ການໃຊ້ແລະການເຜີຍແຜ່ທີ່ບໍ່ໄດ້ພັນລະນາຢູ່ໃນໃບປະກາດແຈ້ງນີ້ ຈະໃຊ້ໄດ້ກໍພຽງແຕ່ສິ່ງໃດຖືກອະນຸຍາດຈາກກົດໝາຍ ຫຼືຈາກການຂຽນໃບອະນຸຍາດຂອງທ່ານ.

## IV. ການຂໍຮ້ອງການຊ່ອຍເຫຼືອ ຫຼື ການຈົ່ມທຸກ

ຖ້າທ່ານມີຄຳຖາມ, ຕ້ອງການລາຍລະອຽດຕື່ມ, ຫຼືຕ້ອງການຈະລາຍງານບັນຫາກ່ຽວກັບການກະທຳຕໍ່ລາຍລະອຽດຂອງທ່ານ, ທ່ານອາດຈະຕິດຕໍ່ຫາຫ້ອງການຮັກສາເຣື້ອງສ່ວນຕົວໄດ້ທີ່ 206-263-9000.

ຖ້າທ່ານຫາກເຊື່ອວ່າສິດທິຂອງຄວາມປິດລັບເຣື້ອງສ່ວນຕົວຂອງທ່ານຖືກຫັກລ້າງ, ທ່ານອາດຈະຂຽນຄຳຮ້ອງ ແລະຍື່ນຂຶ້ນໄປຫາຫ້ອງການຂອງການຮັກສາເຣື້ອງສ່ວນຕົວທີ່ 401 Fifth Avenue, Suite 400, Seattle, WA 98104. ທ່ານອາດຈະສົ່ງການຮ້ອງທຸກເຖິງກັບອະທິບໍດີກົມການບໍຣິການຂອງສຸຂະພາບ ແລະ ມະນຸສະທັມຂອງສະຫະຣັຖໄດ້ຄືກັນ.

*ພວກເຮົານັບຖືສິດທິຂອງທ່ານ ລາຍງານການຮ້ອງທຸກກັບພວກເຮົາ ຫຼື ກັບອະທິບໍດີກົມການບໍຣິການ ຂອງສຸຂະພາບແລະມະນຸດສະທັມ. ຖ້າທ່ານຫາກເລືອກເອົາວິທີການເຊັ່ນນີ້, ພວກເຮົາຈະບໍ່ມີແນວຄິດແກ້ແຄ້ນທ່ານ.*

**ເວບໄຊ້:**

- ພວກເຮົາມີເວບໄຊ້ທີ່ບໍຣິການລາຍລະອຽດກ່ຽວກັບພວກເຮົາ. ສຳຣັບຜົນປໂຍດຂອງທ່ານ, ການປະກາດແຈ້ງສະບັບນີ້ມີຢູ່ໃນເວບໄຊ້ຕາມທີ່ຢູ່ນີ້: www.kingcounty.gov/healthServices/MHSA